NAMTHEUN1

# ນ້ຳເທີນ 1

# ຂ່າວສານປະຈຳເດືອນ ສິງຫາ (8)



## ຂ່າວເດັ່ນປະຈຳເດືອນ:

- NT1PC ປະກອບສ່ວນສົມທົບທຶນ ເພື່ອຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ຢູ່ ແຂວງ ບໍລິຄຳໄຊ
- ຕິດຕາມ-ເຝົ້າລະວັງລະດັບນ້ຳຂຶ້ນ-ລົງຢູ່ຄູກັນນ້ຳຢ້າງ ໄລຍະຝົນຕົກໜັກຕໍ່ເນື່ອງຈາກພະຍຸ Talim
- ມອບອຸປະກອນຮັບໃຊ້ ການເຜີຍແຜ່ຂໍ້ມູນຂ່າວສານ (ລະບົບໂທລະໂຄ່ງ) ໃຫ້ກັບ 8 ບ້ານລຸ່ມເຂື່ອນ
- ກະຊວງພະລັງງານ ແລະ ບໍ່ແຮ່ ລົງຢ້ຽມຢາມວຽກງານພາກສະໜາມ ເມືອງວຽງທອງ
- NT1PC ຮັບໃບກຽດຕິຄຸນ ສະໜັບສະໜູນໃນການສະເຫຼີມສະຫຼອງ ວັນສິ່ງແວດລ້ອມ ແຫ່ງຊາດ ແລະ ວັນສິ່ງແວດລ້ອມໂລກ 5 ມິຖຸນາ 2023



## ຂ່າວສານໃນສະບັບນີ້:


- ກິດຈະກຳ ທັດສະນະສຶກສາ ກຸ່ມສົ່ງເສີມອາຊີບ (Off-farm) ທີ່ແຂວງຊຽງຂວາງ
- ກອງປະຊຸມລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດວຽກຟື້ນຟູປະຈຳເດືອນຂັ້ນບ້ານ
- ສະໜັບສະໜູນທຶນ ສຳລັບວຽກງານຕ້ານການລະບາດຂອງພະຍາດໄຂ້ຍຸງລາຍ
- ກອງປະຊຸມປຶກສາຫາລືວາງແຜນຂະຫຍາຍການປູກຜັກ
- ວຽກງານສົ່ງເສີມການຂາຍ ແລະ ການຕະຫລາດ


ອ່ານຫົວຂໍ້ອື່ນໆ ແລະ ເນື້ອຫາຂ່າວທັງໝົດ ໜ້າຖັດໄປ >>>

## 1. ຕິດຕາມ-ເຝົ້າລະວັງລະດັບນ້ຳຂຶ້ນ-ລົງຢູ່ຄູກັນນ້ຳຢ້າງໄລຍະຝົນຕົກໜັກຕໍ່ເນື່ອງຈາກພະຍຸ Talim



ໃນໄລຍະທີ່ຜ່ານມາ ເກີດມີຝົນຕົກປານກາງ ຫາ ໜັກ ໃນຫລາຍທ້ອງຖິ່ນຂອບເຂດທົ່ວປະເທດເປັນເວລາຫລາຍວັນ. ພ້ອມດຽວ ກັນກັບການສືບຕໍ່ປົກຄຸມຂອງກະແສລົມມໍລະສຸມຕາວັນຕົກສ່ຽງໃຕ້ ແລະ ລົມມໍລະສຸມມີນຊູນ ດ້ວຍກຳລັງປານກາງ ຫາ ຮຸນແຮງ ຊຶ່ງເຮັດໃຫ້ມີຝົນຕົກໃນລະດັບຄ່ອຍຫາປານກາງເປັນບໍລິເວນກວ້າງ ແລະ ຕົກໜັກໃນບາງທ້ອງຖິ່ນ ຢູ່ໃນແຂວງ ທາງພາກເໜືອດ້ານຕາເວັນອອກ ລົງຫາພາກກາງ ແລະ ພາກໃຕ້ ໂດຍເຮັດໃຫ້ລະດັບນ້ຳຢູ່ຕາມສາຂາຕ່າງໆເພີ່ມຂຶ້ນຕື່ມອີກ.

ເລີ່ມແຕ່ວັນທີ 4 ສິງຫາ 2023 ຢູ່ເຂດບ້ານນ້ຳຢ້າງ ເມືອງວຽງທອງ ແຂວງບໍລິຄຳໄຊ ເກີດມີຝົນຕົກລົນຢ່າງຕໍ່ເນື່ອງ ເຊິ່ງເປັນສາເຫດພາໃຫ້ສາຍນ້ຳຢ້າງ, ນ້ຳກ້າງ ແລະ ນ້ຳງອນ ເພີ່ມຂຶ້ນ ແລະ ເກີດນ້ຳນອງຢ່າງໄວວາຈົນເກີນລະດັບປາກທໍ່ຂອງຄູກັນນ້ຳ. ລະດັບນ້ຳທີ່ສູງຂຶ້ນເຮັດໃຫ້ບາງຈຸດບໍ່ສາມາດລະບາຍນ້ຳອອກໄດ້ ໂດຍສະເພາະແມ່ນຢູ່ຈຸດກ້ອງເຮືອນຂອງ ທ້າວ ແຫຼ້ ທີ່ບ້ານນ້ຳຢ້າງ ແລະ ຈຸດໜອງທີ 3 ຂອງຄູກັນນ້ຳ. ເພື່ອແກ້ໄຂສະພາບການດັ່ງກ່າວ, ທີມງານພາກສະໜາມ ບໍລິສັດໄຟຟ້ານ້ຳເທີນ 1 ຈຳກັດ ປະຈຳຢູ່ເມືອງວຽງທອງ ໄດ້ກະກຽມເຄື່ອງມືອຸປະກອນຮັບມືກັບໄພນ້ຳຖ້ວມທັນທີ ໂດຍນຳເອົາເຄື່ອງຈັກດູດນ້ຳ ຈຳນວນ 2 ເຄື່ອງ ເພື່ອດູດນ້ຳອອ. ເຊິ່ງເລີ່ມຈັດຕັ້ງປະຕິບັດດູດນ້ຳອອກນອກຄູກັນນ້ຳ ແຕ່ເວລາ 8:30-24:00 ໂມງ ໂດຍສາມາດແກ້ໄຂບັນຫາການລະບາຍນ້ຳໄດ້ທັນການ ແລະ ເຮັດໃຫ້ນ້ຳດ້ານໃນຂອງຄູກັນນ້ຳຢູ່ໃນລະດັບທີ່ປອດໄພ.





ພ້ອມດຽວກັນນີ້, ທ່ານ ປໍລີ ບົວລົ່ງຜູ້ຕາງໜ້າທີມງານ ບໍລິສັດໄຟຟ້ານ້ຳເທີນ1 ຈຳກັດ ແລະ ທີມງານ ບໍລິສັດ ອີແອນອີ (E&E) ຍັງໄດ້ສືບຕໍ່ເຝົ້າລະວັງຈຸດທີ່ມີຄວາມສ່ຽງໄພນ້ຳຖ້ວມຢ່າງຕໍ່ເນື່ອງ ນັບແຕ່ວັນທີ 5 ສິງຫາ 2023 ຮອດປະຈຸບັນ ແລະ ຈະສືບຕໍ່ເຝົ້າລະວັງຈົນກວ່າຝົນຈະເຊົາ.

## 2. ບໍລິສັດ ໄຟຟ້ານ້ຳເທີນ 1 ສະໜັບສະໜູນທຶນ ສຳລັບວຽກງານຕ້ານການລະບາດຂອງພະຍາດໄຂ້ຍຸງລາຍ



ວັນທີ 22 ສິງຫາ ທີ່ຜ່ານມານີ້, ທ່ານ ເຢີ ວາງເຢ່ຍວາ ຮອງຜູ້ຈັດການພາກສະໜາມ ໜ່ວຍງານສັງຄົມ ບໍລິສັດໄຟຟ້ານ້ຳເທີນ 1 ໄດ້ມອບເງິນສະໜັບສະໜູນ ມູນຄ່າ 5,000,000 ກີບ ໃຫ້ຫ້ອງວ່າການ ເມືອງວຽງທອງ ເພື່ອນຳໃຊ້ເຂົ້າໃນວຽກງານປ້ອງກັນຍຸງລາຍ. ໃຫ້ກຽດຮັບໂດຍ ທ່ານ ອາລຸນສັກ ປະທຳມະວົງ - ຮອງເຈົ້າເມືອງວຽງທອງ ແຂວງບໍລິຄຳໄຊ, ພ້ອມກັບຜູ້ຕາງໜ້າຈາກຫ້ອງວ່າການເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ. ສຳລັບທຶນສະໜັບສະໜູນໃນຄັ້ງນີ້, ອຳນາດການປົກຄອງ ແລະ ບໍລິຫານເມືອງວຽງທອງຈະນຳໃຊ້ໃນກິດຈະກຳໂຄສະນາເຜີຍແຜ່ກ່ຽວກັບພະຍາດໄຂ້ຍຸງລາຍ ແລະ ພົ່ນຢາກຳຈັດຍຸງລາຍ ຕາມຈຸດທີ່ມີຄວາມສ່ຽງຕໍ່ການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ. ໃນຕອນທ້າຍຂອງພິທີມອບ-ຮັບດັ່ງກ່າວ, ທ່ານ ຮອງ ເຈົ້າເມືອງ ກໍ່ໄດ້ກ່າວຄຳຂອບໃຈ ມາຍັງການນຳ ຂອງບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ທີ່ໄດ້ໃຫ້ການສະໜັບສະໜູນ ຊ່ວຍເຫຼືອດ້ານງົບປະມານ ໃນຄັ້ງນີ້, ລວມທັງການໃຫ້ຄວາມຊ່ວຍເຫຼືອໃນຕະຫຼອດໄລຍະທີ່ຜ່ານມາ.

- E&E: E&E Engineering and Service Company Limited (ຜູ້ໃຫ້ບໍລິການທາງດ້ານ ການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ໃຫ້ເຂື່ອນໄຟຟ້ານ້ຳເທີນ 1)

## 3. ກອງປະຊຸມລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດວຽກຟື້ນຟູປະຈຳເດືອນຂັ້ນບ້ານ

ຕອນບ່າຍ ໃນວັນທີ 28 ສິງຫາ 2023, ທີ່ ຫ້ອງປະຊຸມ ໂຮງຮຽນບ້ານເມືອງມ່ວນ, ໄດ້ເປີດກອງປະຊຸມລາຍງານຄວາມຄືບໜ້າປະຈຳເດືອນຂັ້ນບ້ານ, ພາຍໃຕ້ການເປັນປະທານຂອງ ທ່ານ ຄຳພິງ ໄຊຍະໂຊກ ນາຍບ້ານໃຫຍ່ ບ້ານເມືອງມ່ວນ, ຄະນະປະທານຮ່ວມມີ ທ່ານ ອຸທອນ ສິງຫາດວງປັນຍາ ຫົວໜ້າກອງເລຂາ, ມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຈາກ ຄະນະປະສານງານຂັ້ນເມືອງ DWG, ນາຍບ້ານນ້ຳຢ້າງ, ຮອງນາຍບ້ານຫ້ວຍຫອຍ, ການຈັດຕັ້ງບ້ານເມືອງມ່ວນ, ເຖົ້າແກ່ແນວໂຮມ, ກອງທຶນບ້ານເມືອງມ່ວນ, ທີມງານ ບໍລິສັດ ໄຟຟ້ານ້ຳເທີນ 1, ທີມງານ ກຸ່ມບໍລິສັດ ພອນສັກ, ອຳນວຍການໂຮງຮຽນປະຖົມບ້ານເມືອງມ່ວນ, ລວມທັງໝົດ 20 ທ່ານ, ຍິງ 01 ທ່ານ.



ຈຸດປະສົງຂອງກອງປະຊຸມແມ່ນ ເພື່ອທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດວຽກໃນ 1 ເດືອນຜ່ານມາ, ປຶກສາຫາລື ກ່ຽວກັບວຽກງານທີ່ເຮັດສຳເລັດ ແລະ ປະເດັນທີ່ຍັງຄົງຄ້າງ. ນອກນັ້ນ, ຍັງໄດ້ແບ່ງຄວາມຮັບຜິດຊອບໃຫ້ ອຳນາດການປົກຄອງຂັ້ນບ້ານ, ຂັ້ນເມືອງ, ຂັ້ນແຂວງ ແລະ ໂຄງການ ເພື່ອຕິດຕາມຊຸກຍູ້ແກ້ໄຂວຽກທີ່ຍັງຄົງຄ້າງ ແລະ ທີ່ປະຊຸມ ຍັງໄດ້ເອກະພາບກັນ ວາງແຜນສູ້ຊົນຈັດຕັ້ງປະຕິບັດວຽກໃຫ້ສຳເລັດພາຍໃນເດືອນກັນຍາ ຕື່ມອີກ. ທ່ານສາມາດຮັບຊົມວີດີໂອຂ່າວໄດ້ທີ່ https://bit.ly/44KoPEE.

## 4. ກຸ່ມປູກຜັກເຮືອນຮົ່ມ ປະຊຸມປຶກສາຫາລືວາງແຜນຂະຫຍາຍການປູກຜັກ



ວັນທີ 16 ສິງຫາ 2023, ທ່ານ ບັນທະວົງ ສີລະປະພັນ , ພະນັກງານການຕະຫລາດ ຂອງໜ່ວຍງານສັງຄົມ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ສົມທົບກັບ ທີມງານປູກຝັງ ກຸ່ມບໍລິສັດພອນສັກ ໄດ້ຈັດປະຊຸມປຶກສາຫາລືເພື່ອວາງແຜນຂະຫຍາຍການປູກຜັກກັບສະມາຊິກກຸ່ມປູກຜັກເຮືອນຮົ່ມ ບ້ານຫ້ວຍຫອຍ. ໂດຍການເປັນປະທານຂອງ ທ່ານ ໄມປັນ ສີລາຄຳ ຮອງນາຍບ້ານຫ້ວຍຫອຍ, ເຊິ່ງມີສະມາຊິກເຂົ້າຮ່ວມ 40 ຄົນ, ຍິງ 34 ຄົນ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອຖອດຖອນບົດຮຽນໃນການປູກຜັກຜ່ານມາ ແລະ ວາງແຜນການປູກຜັກໃນລະດູຝົນ, ພ້ອມທັງນຳສະເໜີຄວາມຕ້ອງການຜັກຂອງຕະຫລາດຕື່ມອີກ. ໄລຍະທີ່ຜ່ານມາ, ການປູກຜັກໃນລະດູຝົນພົບບັນຫາຫຼາຍດ້ານ ເຊັ່ນ: ຄວາມຫຍຸ້ງຍາກໃນການບົວລະບັດຮັກສາ, ຜັກເປື່ອຍ ແລະ ເນົ່າໄວ, ຝຸ່ນບໍ່ພຽງພໍ ແລະ ຍັງມີສັດຕູພືດທີ່ກັດກິນພືດຜັກ ເຊັ່ນ: ຫອຍ, ບົ້ງ, ເພ້ຍ ແລະ ອື່ນໆ. ດັ່ງນັ້ນ, ແຜນການປັບປຸງການປູກຜັກໃນຕໍ່ໜ້າແມ່ນ ຈະເນັ້ນການອະນາໄມບໍລິເວນເຮືອນຮົ່ມ, ການສ້ອມແປງເຮືອນຮົ່ມຄືນໃໝ່ ສຳລັບຫຼັງທີ່ເປ່ເພ, ການຫົດນ້ຳ ແລະ ກະຈາຍການປູກຜັກແຕ່ລະຊະນິດ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດ. ສຳລັບຜັກທີ່ໄດ້ແນະນຳໃຫ້ປູກ ແລະ ມີຄວາມຕ້ອງການທາງການຕະຫຼາດສູງໃນລະດູຝົນ ຄື: ຫອມບົ່ວ, ຫອມປ້ອມ, ຫອມລາບ, ຜັກກາດຊອມ, ຜັກບົ້ງ ແລະ ຜັກຫົມ.

## 5. ກິດຈະກຳ ທັດສະນະສຶກສາ ວຽກອອບຟາມ (Off-farm) ທີ່ແຂວງຊຽງຂວາງ ຂອງກຸ່ມ 2




ໃນລະຫວ່າງວັນທີ15-18 ສິງຫາ 2023, ຄະນະຂອງທີມງານທັດສະນະສຶກສາຈາກເມືອງວຽງທອງ ແຂວງບໍລິຄຳໄຊ, ໂຄງການໄຟຟ້ານ້ຳເທີນ 1 ນຳພາທີມໂດຍ ທ່ານ ສົມສັກ ດວງປັນຍາ ຫົວໜ້າຜູ້ຈັດການພາກສະໜາມ ກຸ່ມບໍລິສັດ ພອນສັກ (ເຊິ່ງເປັນຜູ້ຈັດຕັ້ງປະຕິບັດ ວຽກງານຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ຂອງບໍລິສັດ ໄຟຟ້າ ນ້ຳເທີນ 1) ແລະ ຜູ້ຕາງໜ້າອຳນາດການປົກຄອງເມືອງ ທ່ານ ນາງ ລຳພອນ ເທບວົງໄຊ ປະທານສະຫະພັນແມ່ຍິງເມືອງວຽງທອງ ພ້ອມດ້ວຍສະມາຊິກກຸ່ມຕັດຫຍິບ, ຕ່ຳຫູກ, ແປຮູບອາຫານ, ຕີເຫລັກ, ຮ້ານອາຫານ, ສ້ອມແປງລົດຈັກ, ສ້ອມແປງເຄື່ອງໄຟຟ້າ ແລະ ກຸ່ມບໍລິການ (ເສີມສວຍ, ຕັດຜົມຊາຍ) ຂອງກຸ່ມ 2 ທີ່ມາຈາກ ບ້ານທ່າແພ, ບ້ານນ້ຳຢ້າງ, ບ້ານຈອມທອງ, ບ້ານເມືອງມ່ວນ ແລະ ບ້ານຄອນຕ່າວ, ລວມທັງໝົດ 30 ຄົນ, ຍິງ 18 ຄົນ. ການໄປທັດສະນະສຶກສາຄັ້ງນີ້ແມ່ນການເດີນທາງ ເພື່ອໄປຮຽນຮູ້ ແລະ ຖອດຖອນບົດຮຽນຢູ່ 3 ເມືອງຂອງແຂວງຊຽງຂວາງ ລວມມີເມືອງຜາໄຊ, ເມືອງແປກ ແລະ ເມືອງຄຳ. ໂດຍມີຈຸດປະສົງ ເພື່ອໄປຮຽນຮູ້ກິດຈະກຳສົ່ງເສີມອາຊີບຕ່າງໆ ເປັນຕົ້ນຢູ່ເມືອງຜາໄຊແມ່ນກິດຈະກຳຕ່ຳຫູກ (ຕ່ຳໄໝ) ຢູ່ ບ້ານໄຮ, ຊຶ່ງມີຫຼາຍກວ່າ 40 ຄອບຄົວ.





ໃນນັ້ນ, ທີມທັດສະນະສຶກສາໄດ້ລົງຢ້ຽມຢາມກິດຈະກຳຕ່າງໆ ເຊັ່ນ: ກິດຈະກຳຕ່ຳຫູກຂອງປະຊາຊົນ ບ້ານໄຮ ເມືອງຜາໄຊ ເຊິ່ງມີພໍ່ຄ້າ-ແມ່ຄ້າຄົນກາງມາເກັບຊື້ເຖິງສະຖານທີ່ ແລະ ຂາຍໃນລາຄາ 180,000ກີບ/ຜືນ, ກິດຈະກຳຕີບ່ວງ ແລະ ສິນຄ້າຂອງທີ່ລະນຶກຮູບສັດຕ່າງໆຕາມສັ່ງ ຢູ່ ບ້ານນາເພຍ ເຊິ່ງບ່ວງຂາຍໃນລາຄາ 19,000 ກີບ/10ກ້ານ ແລະ ຂອງທີ່ລະນຶກ ເລີ່ມຕົ້ນທີ່ລາຄາ 10,000 ກີບ, ກິດຈະກຳຖັກຟອຍ ແລະ ຜະລິດເຕົາປະຢັດຖ່ານ ຢູ່ ບ້ານນາດີ ຊຶ່ງຟອຍຂາຍໃນລາຄາ 15,000 ກີບ/ກ້ານ ແລະ ເຕົາໄຟອີງຕາມຂະໜາດ ເລີ່ມແຕ່ 60,000 ກີບ ຫາ 160,000 ກີບ/ເຕົາ ແລະ ກິດຈະກຳການຜະລິດເສັ້ນເຝີ ຢູ່ ບ້ານນາທອງ ເມືອງແປກ. ໃນຕອນທ້າຍຂອງການທັດສະນະສຶກສາ, ທີມງານໄດ້ສະຫລຸບຖອດຖອນບົດຮຽນຮ່ວມກັນ ເພື່ອທົບທວນຄວາມເຂົ້າໃຈຂອງແຕ່ລະຄົນ ໃນການໄປທັດສະນະສຶກສາຄັ້ງນີ້ ເພື່ອນຳເອົາມາເປັນບົດຮຽນ ໃນການປະກອບອາຊີບເສີມຂອງຄອບຄົວ ເພື່ອຫາລາຍຮັບເຂົ້າຄອບຄົວຂອງຕົນເອງ.





- Off-farm: ກິດຈະກຳສົ່ງເສີມອາຊີບ

## 6. ວຽກງານສົ່ງເສີມການຂາຍ ແລະ ການຕະຫລາດ





ທີມງານສົ່ງເສີມການຂາຍ ແລະ ການຕະຫຼາດ ນຳພາໂດຍ ທ່ານ ບັນທະວົງ ສີລະປະພັນ - ພະນັກງານອາວຸໂສ ການຕະຫລາດໜ່ວຍງານສັງຄົມ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ໄດ້ເຜີຍແຜ່ວຽກງານການຕະຫຼາດໃຫ້ສະມາຊິກກຸ່ມປູກຜັກ, ກຸ່ມລ້ຽງສັດ ແລະ ກຸ່ມອົບຟານ ໃຫ້ຮູ້ເຖິງຂໍ້ມູນຄວາມຕ້ອງການຂອງຕະຫຼາດ ເຊັ່ນ: ປະເພດສິນຄ້າທີ່ຕ້ອງການຊື້, ຈຳນວນທີ່ຕ້ອງການຕໍ່ມື້, ລາຄາຊື້ ເຜີຍແຜ່ຂໍ້ມູນແມ່ຄ້າ ແລະ ເບີຕິດຕໍ່ຜູ້ຮັບຊື້ຜົດຜັກ ແລະ ສັດ ຈາກບ້ານຫ້ວຍຫອຍ. ນອກຈາກນັ້ນ ຍັງໄດ້ແນະນຳໃຫ້ຂາຍຜ່ານກຸ່ມທຸລະກິດລວມໝູ່ບ້ານຫ້ວຍຫອຍນຳອີກ. ໃນເດືອນສິງຫາ ປີ 2023 ນີ້, ສາມາດສັງລວມ ແລະ ສະຫຼຸບຂໍ້ມູນຜະລິດຕະພັນທີ່ໄດ້ຂາຍຜ່ານກຸ່ມທຸລະກິດລວມໝູ່ຂອງບ້ານຫ້ວຍຫອຍ ມີຈຳນວນເຖິງ 12,902,000 ກີບ.



ສະຫຼຸບ ແລະ ສັງລວມ ຜະລິດຕະພັນທີ່ໄດ້ຂາຍຜ່ານ ກຸ່ມ ທຸລະກິດ ຮ່ວມໝູ່ ບ້ານ ຫ້ວຍຫອຍ (ຈຳເດືອນ ສິງຫາ ປີ 2023)

NAMTHEUN1

| ລ/ດ | ຊື່ຜະລິດຕະພັນ | ຈຳນວນສະມາຊິກ | ຈຳນວນໂຕທີ່ຂາຍ | ຈຳນວນກິໂລ&ມັດທີ່ຂາຍ | ເງິນທີ່ໄດ້ຮັບທັງໝົດ | ເງິນກຳໄລຈາກການຂາຍສິນຄ້າ | ຈັດສັນ... ປະມານ | ໝາຍເຫດ |
|---|---|---|---|---|---|---|---|---|
| 1 | ຜັກບົ່ວ | 43 | | 410 | 8,902,000 | 365,000 | | |
| 2 | ເຫັດ | 21 | | 20 | 600,000 | | | |
| 3 | ກົບ | 41 | | | | | | |
| 4 | ປາດຸກ | 40 | | | | | | |
| 5 | ໄກ່ | 102 | 11 | 9 | 680,000 | | | |
| 6 | ເປັດ | 55 | 21 | 43 | 2,220,000 | | | |
| 7 | ໝູ | 21 | | | | | | |
| 8 | ແບ້ | 33 | | | | | | |
| 9 | ງົວ | 208 | | | | | | |
| 10 | ຄວາຍ | | | | | | | |
| 11 | ຊີ້ນ | 60 | | 2 | 500,000 | | | |
| 12 | ຈອງ | 1 | | | | | | |
| 13 | ມີດ | 5 | | | | | | |
| 14 | ຈັກສານ | 9 | | | | | | |
| ລວມທັງໝົດ: | | 639 | 32 | 484 | 12,902,000 | 365,000 | | |







## 7. ກະຊວງພະລັງງານ ແລະ ບໍ່ແຮ່ ຢ້ຽມຢາມສະໜາມ ເມືອງວຽງທອງ





ຕອນເຊົ້າ ວັນທີ 24 ສິງຫາ 2023, ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ໄດ້ຕ້ອນຮັບແຂກລັດຖະບານຈາກກົມຄຸ້ມຄອງຄວາມປອດໄພອຸດສະຫະກຳພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່ ນຳໂດຍທ່ານ ທ່ານ ພູໄຊ ວຽງວິໄຊ ຫົວໜ້າພະແນກຄຸ້ມຄອງຄວາມປອດໄພຂອງເຂື່ອນພ້ອມຄະນະ 3 ທ່ານ. ຈຸດປະສົງຂອງການຢ້ຽມຢາມຄັ້ງນີ້ແມ່ນ ເພື່ອກວດກາລະບົບຄູກັນນ້ຳຢ້າງ ໂດຍມີ ທ່ານ ຂັນຕິ ພົນທະວົງ ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ, ທ່ານ ບຸນເພັງ ດວງມາລາ ຜູ້ຈັດການພາກສະໜາມ ພ້ອມດ້ວຍທີມງານສັງຄົມປະຈຳເມືອງວຽງທອງ ແລະ ທີມງານ E&E ນຳພາຄະນະໄປສຳຫຼວດ ແລະ ກວດກາຄູກັນນ້ຳ. ການກວດກາແມ່ນຢູ່ 2 ຈຸດ ຄື: ຈຸດນ້ຳຢ້າງຄຸ້ມວັດ ແລະ ຈຸດນ້ຳຢ້າງ-ນ້ຳງອມ.



ທີມງານພາກສະໜາມ ໄດ້ໃຫ້ຂໍ້ມູນດ້ານວຽກເຕັກນິກ ແລະ ສັງຄົມ ຄື: ລະບົບໂຄງສ້າງຄູກັນນ້ຳຢ້າງ, ການຕິດຕາມລະດັບນ້ຳ, ວິທີປ້ອງກັນ ແລະ ການຮັບມືກັບສະພາບນ້ຳຖ້ວມ ແລະ ການປະສານງານຮ່ວມມືກັບຄະນະບ້ານ ແລະ ອົງການຈັດຕັ້ງເມືອງໃນການກຽມພ້ອມຮັບມືກັບເຫດສຸກເສີນ.

## 8. NT1PC ຮັບໃບກຽດຕິຄຸນ ສະໜັບສະໜູນໃນການສະເຫຼີມສະຫຼອງ ວັນສິ່ງແວດລ້ອມແຫ່ງຊາດ ແລະ ວັນສິ່ງແວດລ້ອມໂລກ 5 ມິຖຸນາ 2023



ໃນຕອນເຊົ້າ ວັນທີ 11 ສິງຫາ 2023, ຢູ່ທີ່ ຫ້ອງປະຊຸມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຈັດພິທີມອບ-ຮັບໃບກຽດຕິຄຸນໃຫ້ແກ່ ຜູ້ທີ່ສະໜັບສະໜູນໃນການສະເຫຼີມສະຫຼອງ ວັນສິ່ງແວດລ້ອມແຫ່ງຊາດ ແລະ ວັນສິ່ງແວດລ້ອມໂລກ, ເຊິ່ງຈັດໂດຍ ກົມສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ເນື່ອງໃນວັນສຳຄັນດັ່ງກ່າວ, ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ໄດ້ມອບທຶນສະໜັບສະໜູນໃຫ້ແກ່ ກົມສິ່ງແວດລ້ອມ - ກຊສ ເພື່ອເປັນການປະກອບສ່ວນໃນການກະກຽມບັນດາກິດຈະກຳຕ່າງໆ.



ເປັນກຽດມອບໂດຍ ທ່ານ ວິລະພົນ ນວນແສງສີ ຮອງຫົວໜ້າກົມສິ່ງແວດລ້ອມ - ກຊສ ແລະ ເປັນກຽດຮັບຕາງໜ້າ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ໂດຍ ທ່ານ ບຸນຍັງ ເພັງສຸວັນ ທີ່ປຶກສາຝ່າຍພົວພັນກັບລັດຖະບານ ແລະ ກຳມະການບໍລິຫານ. ໃນປີນີ້, ກົມສິ່ງແວດລ້ອມ ໄດ້ສ້າງຂະບວນການສະເຫຼີມສະຫຼອງ ວັນສິ່ງແວດລ້ອມແຫ່ງຊາດ ຄົບຮອບ 24 ປີ ແລະ ວັນສິ່ງແວດລ້ອມໂລກ ຄົບຮອບ 50 ປີ ວັນທີ 5 ມິຖຸນາ 2023 ພາຍໃຕ້ຄຳຂວັນທີ່ວ່າ: "ສິ່ງແວດລ້ອມຂອງພວກເຮົາຈະດີ ຖ້າຫຼຸດຜ່ອນການນຳໃຊ້ປລາສຕິກ (BEAT PLASTIC POLLUTION)".

- ທ່ານສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ https://bit.ly/3LiKgpl.

## 9. ມອບອຸປະກອນຮັບໃຊ້ ການເຜີຍແຜ່ຂໍ້ມູນຂ່າວສານ (ລະບົບໂທລະໂຄ່ງບ້ານ) ໃຫ້ກັບ 8 ບ້ານ ລຸ່ມເຂື່ອນ





ໃນຕອນເຊົ້າ ວັນທີ 15 ສິງຫາ 2023, ຢູ່ທີ່ ຫ້ອງການບ້ານໂພນຈະເລີນ ເມືອງປາກກະດິງ ແຂວງບໍລິຄຳໄຊ ໄດ້ຈັດພິທີ ມອບ-ຮັບ ອຸປະກອນຮັບໃຊ້ການເຜີຍແຜ່ຂໍ້ມູນຂ່າວສານ (ລະບົບໂທລະໂຄ່ງ) ໃຫ້ 8 ບ້ານລຸ່ມເຂື່ອນໄຟຟ້ານ້ຳເທີນ 1 ເພື່ອອຳນວຍຄວາມສະດວກໃນການຕິດຕໍ່ສື່ສານ, ປະກາດແຈ້ງການ ໃນກໍລະນີສຸກເສີນ ແລະ ວຽກບ້ານການເມືອງຕ່າງໆໃຫ້ພໍ່ແມ່ປະຊາຊົນໄດ້ຮັບຊາບຢ່າງທົ່ວເຖິງ ລວມມູນຄ່າທັງໝົດ 195.061.000 ກີບ. ໂດຍໄດ້ຮັບການສະໜັບ ສະໜູນຈາກບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ. ໃນນັ້ນ ລວມມີ: ບ້ານໂພນຈະ ເລີນ, ບ້ານໂພນໄຊ, ບ້ານຫາດຊາຍຄຳ, ບ້ານປາກຊຸນ, ບ້ານດອນໄຊ, ບ້ານປາກປາງ, ບ້ານປາກກະດິງເໜືອ ແລະ ບ້ານປາກກະດິງໃຕ້. ອຸປະກອນທີ່ນຳມາມອບໃນຄັ້ງນີ້ ປະກອບມີ: ຫົວໂທລະໂຄ່ງ 43 ຫົວ, ສາຍໄຟໂທລະໂຄ່ງ 6.350 ແມັດ, ແອັມ (ເຄື່ອງກະຈາຍສຽງ) 5 ໜ່ວຍ, ໄມໂຄໂຟນ 5 ອັນ, ເສົາຕັ້ງໂທລະໂຄ່ງ 7 ເສົາ ແລະ ອຸປະກອນອື່ນໆທີ່ຈຳເປັນໃນການຕິດຕັ້ງ ລວມທັງການຕິດຕັ້ງຈາກຊ່າງເຕັກນິກ.

ໃນພິທີດັ່ງກ່າວ ເປັນກຽດມອບໂດຍ ທ່ານ ບຸນຍັງ ເພັງສຸວັນ, ທີ່ປຶກສາຝ່າຍພົວພັນກັບລັດຖະບານ ແລະ ກຳມະການບໍລິຫານ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ, ເປັນກຽດຮັບໂດຍຄະນະບ້ານ 8 ບ້ານທີ່ກ່ຽວຂ້ອງ, ໂດຍມີທ່ານ ຂັນຕິ ພັນທະວົງ ຮອງຜູ້ອຳນວຍການໃຫຍ່ ສາຍງານຄວບຄຸມການຜະລິດ ແລະ ບຳລຸງຮັກສາ ບໍລິສັດໄຟຟ້ານ້ຳເທີນ 1 ຈຳກັດ, ທ່ານ ພັດສະດີ ພະສີໄກສອນ ຫົວໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ທ່ານ ສີອຳພອນ ໝາຍໝັ້ນ ຫົວໜ້າຫ້ອງວ່າການເມືອງ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

- ທ່ານສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ https://bit.ly/3Zb0E0W

## 10. ປະກອບສ່ວນສົມທົບທຶນ ເພື່ອຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ຢູ່ ແຂວງ ບໍລິຄຳໄຊ



ໃນໄລຍະທີ່ຜ່ານມາ, ສະພາບອາກາດມີການປ່ຽນແປງຢ່າງຮຸນແຮງເຮັດໃຫ້ເກີດມີພາຍຸ ແລະ ຝົນຕົກໜັກຕໍ່ເນື່ອງໃນຫຼາຍຂົງເຂດທົ່ວປະເທດລາວ. ແຂວງບໍລິຄຳໄຊ ເປັນແຂວງໜຶ່ງທີ່ໄດ້ຮັບ ຜົນກະທົບຈາກ ພາຍຸໝູນເຂດຮ້ອນທາລິມ (Talim) ສົ່ງຜົນໃຫ້ເກີດມີຝົນ ຕົກໜັກຢ່າງຕໍ່ເນື່ອງ ນັບຕັ້ງແຕ່ທ້າຍເດືອນ ກໍລະກົດ ເຖິງ ຕົ້ນເດືອນສິງຫາ 2023, ເຊິ່ງກໍ່ໃຫ້ເກີດຄວາມເສຍຫາຍໃນຫຼາຍດ້ານ ເຊັ່ນ: ດິນເຊາະເຈື່ອນ, ເສັ້ນທາງເປ່ເພ, ນ້ຳຖ້ວມກະທັນຫັນ ແລະ ເຮັດໃຫ້ປະຊາຊົນຫຼາຍຫຼັງຄາເຮືອນໄດ້ຮັບຜົນກະທົບຈາກໄພຂົ່ມຂູ່ທາງທຳມະຊາດຄັ້ງນີ້.

ດັ່ງນັ້ນ, ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ຈຶ່ງເຫັນໄດ້ເຖິງບັນຫາຜົນກະທົບ ແລະ ເຫັນຄວາມຈຳເປັນອັນຮີບ ໂດຍໄດ້ປະກອບສ່ວນສົມທົບທຶນ ຈຳນວນ 100,000,000 ກີບ ເພື່ອຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ຢູ່ ແຂວງ ບໍລິຄຳໄຊ ທີ່ ສະໂມສອນຫ້ອງວ່າການແຂວງ ໃນວັນທີ 29 ສິງຫາ 2023 ທີ່ຜ່ານມາ. ເຊິ່ງເປັນກຽດມອບທຶນສົມທົບ ໂດຍ ທ່ານ ຣັດສະໝີ ຍຸພານິດ - ຜູ້ອຳນວຍການໃຫຍ່, ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ພ້ອມດ້ວຍທີມງານ ແລະ ເປັນກຽດຮັບ ໂດຍ ທ່ານ ປອ. ກອງແກ້ວ ໄຊສິງຄານ - ເຈົ້າແຂວງບໍລິຄຳໄຊ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງລວມມີຜູ້ຕາງໜ້າຈາກຫ້ອງວ່າການແຂວງ ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເຂົ້າຮ່ວມເປັນສັກຂີພິຍານ.

ໃນລະຫວ່າງການ ມອບ-ຮັບ ໃນຄັ້ງນີ້, ທ່ານ ຣັດສະໝີ ຍຸພານິດ ໄດ້ສະແດງຄວາມເປັນຫ່ວງເປັນໄຍເຖິງປະຊາຊົນແຂວງບໍລິຄຳໄຊທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ ໂດຍສະເພາະການສ້ອມແປງເສັ້ນທາງ ແລະ ຊ່ວຍເຫຼືອຜູ້ປະສົບໄພຢູ່ເຂດພູໄຮ. ທ່ານ ປອ. ກອງແກ້ວ ໄຊສິງຄານ ໄດ້ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຄັ້ງນີ້ ແລະ ຈະນຳໃຊ້ທຶນດັ່ງກ່າວໄປຊ່ວຍເຫລືອຜູ້ໄດ້ຮັບຜົນກະທົບຈາກໄພພິບັດຢູ່ແຂວງບໍລິຄຳໄຊໃຫ້ທົ່ວເຖິງ. ໃນຕອນທ້າຍ, ທ່ານ ປອ. ກອງແກ້ວ ໄຊສິງຄານ ຍັງໄດ້ມອບໃບຍ້ອງຍໍຂັ້ນສູງສຸດລະດັບແຂວງ ໃຫ້ກັບ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ສຳລັບຜົນງານການປະກອບສ່ວນດ້ານງົບປະມານ ເຂົ້າໃນການຊ່ວຍເຫຼືອປະຊາຊົນທີ່ປະສົບອຸທົກກະໄພ ຢູ່ແຂວງບໍລິຄຳໄຊ ໃນຄັ້ງນີ້ອີກດ້ວຍ.

- ທ່ານສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ https://bit.ly/3sLpo3z




(ພິທີມອບ-ຮັບເງິນຊ່ວຍເຫຼືອໃຫ້ກັບ ແຂວງບໍລິຄຳໄຊ)



(ພິທີມອບ-ຮັບໃບຍໍຍ້ອງຂັ້ນສູງສຸດລະດັບແຂວງໃຫ້ກັບ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ)

**ຂ່າວສານສັງຄົມປະຈຳເດືອນ ສິງຫາ (8) 2023 ຂອງ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ມີຈຸດປະສົງ ເພື່ອນຳສະເໜີ ກ່ຽວກັບ ບັນດາກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດໂດຍ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ, ພະນັກງານ, ແລະ ຜູ້ຕາງໜ້າທີ່ກ່ຽວຂ້ອງກັບ ບໍລິສັດ ເຊັ່ນ: ວຽກງານດ້ານສັງຄົມ ແລະ ສິ່ງແວດລ້ອມ, ເຊິ່ງກວມເອົາວຽກງານຍົກຍ້າຍ-ຈັດສັນ, ການສຶກສາ, ສາທາລະນະສຸກ, ການສົ່ງເສີມຄວາມເຂັ້ມແຂງໃຫ້ກັບອົງການຈັດຕັ້ງບ້ານ, ວຽກງານພົວພັນກັບລັດຖະບານ ແລະ ກິດຈະກຳອື່ນໆກ່ຽວກັບ ໂຄງການ ເຂື່ອນໄຟຟ້ານ້ຳເທີນ 1.**

**ຂໍ້ມູນຕ່າງໆທີ່ໄດ້ນຳສະເໜີໃນຂ່າວສານສະບັບນີ້ແມ່ນໄດ້ສັງລວມຈາກໜ່ວຍງານສັງຄົມປະຈຳຢູ່ຫ້ອງການພາກສະໜາມ ທີ່ ເມືອງ ວຽງທອງ, ແຂວງ ບໍລິຄຳໄຊ ແລະ ໜ່ວຍງານພົວພັນກັບລັດຖະບານ, ຮຽບຮຽງ ແລະ ອອກແບບໂດຍ ໜ່ວຍງານສື່ສານ, ຊຶ່ງໄດ້ ຮັບການນຳພາ ແລະ ກວດແກ້ໂດຍ ຜູ້ອຳນວຍການພະແນກ (CSR).**

ຂໍ້ມູນຕິດຕໍ່:

ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ, ສຳນັກງານໃຫຍ່

ໜ່ວຍ 15, ຖະໜົນສີທອງ, ບ້ານປາກທ້າງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ

ໂທ +856 21 550775

ອີເມວ info@nt1pc.com

NAMTHEUN1